**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ............/ລບ

ນະຄອນຫຼວງວຽງຈັນ, ວັນທີ....................

(ຮ່າງ)

# ດຳລັດ
# ວ່າດ້ວຍ ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບ ປ່າໄມ້

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍ ປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ..../ກປ, ລົງວັນທີ..........

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການປັບໃໝ ແລະ ນຳໃຊ້ ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບປ່າໄມ້ ເພື່ອເປັນບ່ອນອີງໃຫ້ແກ່ເຈົ້າໜ້າທີ່ປ່າໄມ້ ໃນການປັບໃໝ ແລະ ການປະຕິບັດມາດຕະການຕໍ່ຜູ້ລະເມີດ ຢ່າງຖືກຕ້ອງ, ເຂັ້ມງວດ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ແນໃສ່ເຮັດໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີສະຕິຕື່ນຕົວ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້ ໃຫ້ຍືນຍົງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ; ເຄົາລົບ ແລະ ປະຕິບັດກົດໝາຍ ແລະ ລະບຽບການ; ສະກັດກັ້ນ, ຕ້ານ ການທຳລາຍປ່າໄມ້ ທຸກຮູບແບບ.

### ມາດຕາ 2 ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ

ການປັບໃໝ ແມ່ນ ມາດຕະການທາງດ້ານການເງິນ ທີ່ນຳໃຊ້ຕໍ່ຜູ້ລະເມີດທາງດ້ານບໍລິຫານ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ກ່ຽວກັບປ່າໄມ້ ຕາມອັດຕາຄ່າປັບໃໝທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

ມາດຕະການອື່ນ ແມ່ນ ການນຳໃຊ້ມາດຕະການເພີ່ມ ຈາກມາດຕະການປັບໃໝ ຕໍ່ຜູ້ລະເມີດທາງດ້ານບໍລິຫານ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ກ່ຽວກັບປ່າໄມ້ ເປັນຕົ້ນ ການສຶກສາອົບຮົມ, ການຍຶດເຄື່ອງມື, ອຸປະກອນ, ພາຫະນະ, ໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຂອງກາງ** ໝາຍເຖິງ ເຄື່ອງຈັກ, ເຄື່ອງມື, ອຸປະກອນ ແລະ/ຫຼື ພາຫະນະ ລວມທັງ ໄມ້, ຜະລິດຕະພັນໄມ້, ເຄື່ອງປ່າຂອງດົງ ລວມທັງທີ່ດິນປ່າໄມ້;
2. **ເຄື່ອງຈັກ** ໝາຍເຖິງ ຈັກຕັດໄມ້, ເຄື່ອງຈັກຊອຍໄມ້ (ໄດໄຟຟ້າ, ເລື່ອຍວົງເດືອນ, ເລື່ອຍສາຍພານ, ຈັກກົບໄມ້, ຈັກຄັດຖູໄມ້ ແລະ ເຄື່ອງຈັກອື່ນ);
3. **ເຄື່ອງມື , ອຸປະກອນ** ໝາຍເຖິງ ເລື່ອຍມື, ຂວານ, ພ້າ, ມີດ, ອຸປະກອນສື່ສານຕ່າງໆ ແລະ ເຄື່ອງມືອື່ນ; ພາຫະນະ ໝາຍເຖິງ ລໍ້ຍູ້, ລົດຖີບ, ລົດຈັກ, ລົດໄຖນາເດີນຕາມ, ລົດໄຖໃຫຍ່, ລົດຊີ້ງ, ລົດສາມລໍ້, ເຮືອຫາງຍາວ, ລົດສີ່ລໍ້, ຫົກລໍ້, ເຮືອໂດຍສານ ລົດສິບລໍ້ຂຶ້ນໄປ ແລະ ລົດພ່ວງ;
4. **ລາຄາຕະຫຼາດ** ໝາຍເຖິງ ລາຄາທີ່ຊື້-ຂາຍທົ່ວໄປ ຢູ່ໃນເຂດ ຫຼື ທ້ອງຖິ່ນ ໃດໜຶ່ງ ໂດຍລັດບໍ່ໄດ້ກຳນົດໃຫ້
5. ລາຄາພັນທະທີ່ລັດກຳນົດ ໝາຍເຖິງ ລາຄາທີ່ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ກຳນົດອອກເປັນແຕ່ລະໄລຍະ;
6. **ການປຸງແຕ່ງ** ໝາຍເຖິງ ຂະບວນການຜະລິດໃດໜຶ່ງ ຊຶ່ງນຳໃຊ້ອຸປະກອນ, ເຄື່ອງຈັກ, ເຕັກໂນໂລຊີ ຫຼື ແຮງງານຄົນ ເຂົ້າໃນຂະບວນການຜະລິດ;
7. **ມູນຄ່າຄວາມເສຍຫາຍ** ໝາຍເຖິງ ຄວາມເສຍຫາຍທາງດ້ານຊັບພະຍາກອນປ່າໄມ້ ເຊິ່ງລວມມີ ໄມ້, ເຄື່ອງປ່າຂອງດົງ, ທີ່ດິນປ່າໄມ້, ຊີວະນາໆພັນ ທີ່ເກີດຈາກການລະເມີດ ໄດ້ຄິດໄລ່ເປັນເງິນ.

### ມາດຕາ 4 ຫຼັກການກ່ຽວກັບການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ

ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບປ່າໄມ້ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ ແລະ ລະບຽບການ;
2. ຄຸ້ມຄອງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
3. ຮັບປະກັນຄວາມໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້.

### ມາດຕາ 5 ຂອບເຂດການນຳໃຊ້

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດຕໍ່ກົດໝາຍ ແລະ ລະບຽບການ ກ່ຽວກັບປ່າໄມ້ ຢູ່ ສປປ ລາວ.

## ໝວດທີ 2
## ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບປ່າໄມ້

### ມາດຕາ 6 ການຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. ສອງເທົ່າຕົວຂອງມູນຄ່າຄວາມເສຍຫາຍຕາມລາຄາຕະຫຼາດ ຫຼື ຕາມລາຄາພັນທະທີ່ລັດໄດ້ກຳນົດໄວ້ເປັນແຕ່ລະໄລຍະ ສຳລັບການລະເມີດຄັ້ງທີໜຶ່ງ;
2. ສາມເທົ່າຕົວຂອງມູນຄ່າຄວາມເສຍຫາຍຕາມລາຄາຕະຫຼາດ ຫຼື ຕາມລາຄາພັນທະທີ່ລັດໄດ້ກຳນົດໄວ້ເປັນແຕ່ລະໄລຍະ ສຳລັບການລະເມີດຄັ້ງທີສອງ;
3. ຫ້າເທົ່າຕົວຂອງມູນຄ່າຄວາມເສຍຫາຍຕາມລາຄາຕະຫຼາດ ຫຼື ຕາມລາຄາພັນທະທີ່ລັດໄດ້ກຳນົດໄວ້ເປັນແຕ່ລະໄລຍະ ສຳລັບການລະເມີດຄັ້ງທີສາມ ຂຶ້ນໄປ.

**ມາດຕາ 7 ການ ຊື້ ຂາຍ, ເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ, ນຳຜ່ານ ໄມ້, ຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຊື້ ຂາຍ, ເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ, ນຳຜ່ານ ໄມ້, ຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. ສອງເທົ່າຕົວຂອງມູນຄ່າຄວາມເສຍຫາຍຕາມລາຄາຕະຫຼາດ ຫຼື ຕາມລາຄາພັນທະທີ່ລັດໄດ້ກຳນົດໄວ້ເປັນແຕ່ລະໄລຍະ ສຳລັບການລະເມີດຄັ້ງທີໜຶ່ງ;
2. ສາມເທົ່າຕົວຂອງມູນຄ່າຄວາມເສຍຫາຍຕາມລາຄາຕະຫຼາດ ຫຼື ຕາມລາຄາພັນທະທີ່ລັດໄດ້ກຳນົດໄວ້ເປັນແຕ່ລະໄລຍະ ສຳລັບການລະເມີດຄັ້ງທີສອງ;
3. ຫ້າເທົ່າຕົວຂອງມູນຄ່າຄວາມເສຍຫາຍຕາມລາຄາຕະຫຼາດ ຫຼື ຕາມລາຄາພັນທະທີ່ລັດໄດ້ກຳນົດໄວ້ເປັນແຕ່ລະໄລຍະ ສຳລັບການລະເມີດຄັ້ງທີສາມ ຂຶ້ນໄປ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດ ເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ, ນຳຜ່ານໄມ້, ຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງ ແຕ່ບໍ່ປະຕິບັດ ຕາມເງື່ອນໄຂ ຈະຖືກປັບໃໝ ດັ່ງນີ້:

1. ສິບລ້ານກີບ ສຳລັບການລະເມີດຄັ້ງທີໜຶ່ງ;
2. ຊາວລ້ານກີບ ສຳລັບການລະເມີດຄັ້ງທີສອງ;
3. ສາມສິບລ້ານກີບ ສຳລັບການລະເມີດຄັ້ງທີສາມຂຶ້ນໄປ.

**ມາດຕາ 8 ການປຸງແຕ່ງ, ມີໄວ້ຄອບຄອງໄມ້ ແລະ ເຄື່ອງປ່າຂອງດົງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນຳເອົາໄມ້ ແລະ ເຄື່ອງປ່າຂອງດົງ ປຸງແຕ່ງ, ມີໄວ້ຄອບຄອງໄມ້ ແລະ ເຄື່ອງປ່າຂອງດົງ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. ສອງເທົ່າຕົວຂອງມູນຄ່າຄວາມເສຍຫາຍຕາມລາຄາຕະຫຼາດ ຫຼື ຕາມລາຄາພັນທະທີ່ລັດໄດ້ກຳນົດໄວ້ເປັນແຕ່ລະໄລຍະ ສຳລັບການລະເມີດຄັ້ງທີໜຶ່ງ;
2. ສາມເທົ່າຕົວຂອງມູນຄ່າຄວາມເສຍຫາຍຕາມລາຄາຕະຫຼາດ ຫຼື ຕາມລາຄາພັນທະທີ່ລັດໄດ້ກຳນົດໄວ້ເປັນແຕ່ລະໄລຍະ ສຳລັບການລະເມີດຄັ້ງທີສອງ;
3. ຫ້າເທົ່າຕົວຂອງມູນຄ່າຄວາມເສຍຫາຍຕາມລາຄາຕະຫຼາດ ຫຼື ຕາມລາຄາພັນທະທີ່ລັດໄດ້ກຳນົດໄວ້ເປັນແຕ່ລະໄລຍະ ສຳລັບການລະເມີດຄັ້ງທີສາມ ຂຶ້ນໄປ.

**ມາດຕາ 9 ການ ບຸກລຸກ ແລະ ທຳລາຍປ່າໄມ້ ແລະ ທີ່ດິນປ່າໄມ້**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ ລະເມີດລະບຽບການ ປ່າໄມ້ ເປັນຕົ້ນ ບຸກລຸກ, ບຸກເບີກ, ບຽດຍຶດ, ຈັບຈອງ, ຖາກຖາງ, ຈູດ, ທຳລາຍ ປ່າໄມ້ ແລະ ທີ່ດິນປ່າໄມ້ ຈະຖືກປັບໃໝ ດັ່ງນີ້:

1. ສອງລ້ານກີບ ຕໍ່ ເຮັກຕາ ບວກກັບ ໜຶ່ງເທົ່າຕົວ ຂອງມູນຄ່າຄວາມເສຍຫາຍ ຕາມການປະເມີນຕົວຈິງ ສຳລັບການລະເມີດຄັ້ງທີໜຶ່ງ;
2. ສາມລ້ານກີບ ຕໍ່ ເຮັກຕາ ບວກກັບ ສາມເທົ່າຕົວ ຂອງມູນຄ່າຄວາມເສຍຫາຍ ຕາມການປະເມີນຕົວຈິງ ສຳລັບການລະເມີດຄັ້ງທີສອງ;
3. ຫ້າລ້ານກີບ ຕໍ່ ເຮັກຕາ ບວກກັບ ຫ້າເທົ່າຕົວ ຂອງມູນຄ່າຄວາມເສຍຫາຍ ຕາມການປະເມີນຕົວຈິງ ສຳລັບການລະເມີດສາມຄັ້ງ ຂຶ້ນໄປ.

**ມາດຕາ 10 ການສ້າງຕັ້ງ ໂຮງງານອຸດສາຫະກຳປຸງແຕ່ງໄມ້**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ສ້າງຕັ້ງ ໂຮງງານເລື່ອຍໄມ້, ໂຮງງານປຸງແຕ່ງໄມ້, ໂຮງງານເຟີນີເຈີ ແລະ ໂຮງເຟີນີເຈີ ແບບຄອບຄົວ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. ຫ້າລ້ານກີບ ສຳລັບໂຮງເຟີນີເຈີ ແບບຄອບຄົວ;
2. ຊາວລ້ານກີບ ສຳລັບໂຮງງານຂະໜາດນ້ອຍ;
3. ສີ່ສິບລ້ານກີບ ສຳລັບໂຮງງານຂະໜາດກາງ;
4. ໜຶ່ງຮ້ອຍລ້ານກີບ ສຳລັບໂຮງງານຂະໜາດໃຫຍ່.

ບຸກຄົນ ຫຼື ນິຕິບຸກຄົນ ທີ່ສ້າງຕັ້ງ ໂຮງງານເລື່ອຍໄມ້, ໂຮງງານປຸງແຕ່ງໄມ້, ໂຮງງານເຟີນີເຈີ ແລະ ໂຮງເຟີນີເຈີ ແບບຄອບຄົວ ທີ່ໄດ້ຮັບອະນຸຍາດ ແຕ່ດຳເນີນກິດຈະການ ຫຼື ເຄື່ອນໄຫວບໍ່ຖືກຕ້ອງ ຕາມການອະນຸຍາດ ຈະຖືກປັບ ໃໝ ດັ່ງນີ້:

ໂຮງເຟີນີເຈີ ແບບຄອບຄົວ:
1. ສອງລ້ານ ສຳລັບການລະເມີດຄັ້ງທີໜຶ່ງ;
2. ຫ້າລ້ານ ສຳລັບການລະເມີດຄັ້ງທີສອງຂຶ້ນໄປ.

ໂຮງງານຂະໜາດນ້ອຍ:
1. ຫ້າລ້ານ ສຳລັບການລະເມີດຄັ້ງທີໜຶ່ງ;
2. ສິບລ້ານ ສຳລັບການລະເມີດຄັ້ງທີສອງຂຶ້ນໄປ.

ໂຮງງານຂະໜາດກາງ:
1. ສິບລ້ານ ສຳລັບການລະເມີດຄັ້ງທີໜຶ່ງ;
2. ຊາວລ້ານ ສຳລັບການລະເມີດຄັ້ງທີສອງຂຶ້ນໄປ.

ໂຮງງານຂະໜາດໃຫຍ່:
1. ສາມສິບລ້ານ ສຳລັບການລະເມີດຄັ້ງທີໜຶ່ງ;
2. ຫ້າສິບລ້ານ ສຳລັບການລະເມີດຄັ້ງທີສອງຂຶ້ນໄປ.

### ມາດຕາ 11 ການສ້າງຕັ້ງ ໂຮງງານປຸງແຕ່ງ ເຄື່ອງປ່າຂອງດົງ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ສ້າງຕັ້ງ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ຫ້າສິບລ້ານກີບ.

ບຸກຄົນ ຫຼື ນິຕິບຸກຄົນ ທີ່ສ້າງຕັ້ງ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທີ່ໄດ້ຮັບອະນຸຍາດ ແຕ່ດຳເນີນກິດຈະການ ຫຼື ເຄື່ອນໄຫວບໍ່ຖືກຕ້ອງ ຕາມການອະນຸຍາດ ແມ່ນຈະຖືກປັບໃໝດັ່ງນີ້:
1. ໜຶ່ງສ່ວນຮ້ອຍ ຂອງທຶນຈົດທະບຽນທັງໝົດ ສຳລັບການລະເມີດຄັ້ງທີໜຶ່ງ;
2. ສາມສ່ວນຮ້ອຍ ຂອງທຶນຈົດທະບຽນທັງໝົດ ສຳລັບການລະເມີດຄັ້ງທີສອງຂຶ້ນໄປ.

### ມາດຕາ 12 ການສ້າງຕັ້ງໂຮງງານຜະລິດຖ່ານ ຫຼື ເຕົາເຜົາຖ່ານ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ສ້າງຕັ້ງ ໂຮງງານຜະລິດຖ່ານ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ໜຶ່ງຮ້ອຍລ້ານກີບ.

ບຸກຄົນ ຫຼື ນິຕິບຸກຄົນ ທີ່ສ້າງຕັ້ງ ເຕົາເຜົາຖ່ານ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ຊາວລ້ານກີບ.

ບຸກຄົນ ຫຼື ນິຕິບຸກຄົນ ທີ່ສ້າງຕັ້ງ ໂຮງງານຜະລິດຖ່ານ ຫຼື ເຕົາເຜົາຖ່ານ ທີ່ໄດ້ຮັບອະນຸຍາດ ແຕ່ດຳເນີນກິດຈະການ ຫຼື ເຄື່ອນໄຫວບໍ່ຖືກຕ້ອງ ຕາມການອະນຸຍາດ ຈະຖືກປັບໃໝດັ່ງນີ້:
1. ໜຶ່ງສ່ວນຮ້ອຍ ຂອງທຶນຈົດທະບຽນທັງໝົດ ສຳລັບການລະເມີດຄັ້ງທີໜຶ່ງ;
2. ສາມສ່ວນຮ້ອຍ ຂອງທຶນຈົດທະບຽນທັງໝົດສຳລັບການລະເມີດຄັ້ງທີສອງ.

### ມາດຕາ 13 ການ ຍ້າຍ, ປ່ຽນແປງ ຫຼື ທຳລາຍ ປ້າຍ ຫຼື ເຄື່ອງໝາຍເຂດແດນ ປ່າໄມ້

ບຸກຄົນ ຫຼື ນິຕິບຸກຄົນ ທີ່ ຍ້າຍ, ປ່ຽນແປງ ຫຼື ທຳລາຍ ປ້າຍບົ່ງບອກ, ປ້າຍສຶກສາອົບຮົມ, ປ້າຍໂຄສະນາ ຫຼື ຫຼັກໝາຍເຂດແດນ ປ່າໄມ້ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ສາມສິບລ້ານກີບ.

**ມາດຕາ 14 ການຄອບຄອງ ແລະ ນຳໃຊ້ ເຄື່ອງຈັກ ແລະ ອາໄຫຼ່ເຄື່ອງຈັກຊຸດຄົ້ນ ໄມ້ ແລະ ເຄື່ອງປ່າຂອງດົງ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ຄອບຄອງ ແລະ ນຳໃຊ້ ເຄື່ອງຈັກ ແລະ ອາໄຫຼ່ເຄື່ອງຈັກຊຸດຄົ້ນ ໄມ້ ແລະ ເຄື່ອງປ່າຂອງດົງ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. ສາມລ້ານກີບ ຕໍ່ເຄື່ອງ ຕໍ່ຄັ້ງ ພ້ອມທັງ ສຳລັບການລະເມີດຄັ້ງທີໜຶ່ງ;
2. ຫ້າລ້ານກີບ ຕໍ່ເຄື່ອງ ຕໍ່ຄັ້ງສຳລັບການລະເມີດຄັ້ງທີສອງຂຶ້ນໄປ.

**ມາດຕາ 15 ການນຳໃຊ້ ພາຫະນະ ເພື່ອ ລາກແກ່, ຂົນສົ່ງ ໄມ້ ແລະ ເຄື່ອງປ່າຂອງດົງ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ນຳໃຊ້ ລໍ້ຍູ້, ລົດຖີບ, ລົດຈັກ ເພື່ອລາກແກ່ ແລະ ຂົນສົ່ງ ໄມ້ ແລະ ເຄື່ອງປ່າຂອງດົງ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. ຫ້າແສນກີບ ຕໍ່ຄັນ ຕໍ່ຄັ້ງ ສຳລັບການລະເມີດຄັ້ງທີໜຶ່ງ;
2. ໜຶ່ງລ້ານກີບ ຕໍ່ຄັນ ຕໍ່ຄັ້ງ ສຳລັບການລະເມີດຄັ້ງທີສອງ;
3. ສອງລ້ານກີບ ຕໍ່ຄັນ ຕໍ່ຄັ້ງ ສຳລັບການລະເມີດຄັ້ງທີສາມຂຶ້ນໄປ;

ບຸກຄົນ ຫຼື ນິຕິບຸກຄົນ ທີ່ນຳໃຊ້ ລົດໄຖນາເດີນຕາມ, ລົດຊີ໊ງ, ລົດສາມລໍ້, ເຮືອຫາງຍາວ ເພື່ອລາກແກ່ ແລະ ຂົນສົ່ງ ໄມ້ ແລະ ເຄື່ອງປ່າຂອງດົງ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. ຫ້າລ້ານກີບ ຕໍ່ຄັນ, ລຳ ຕໍ່ຄັ້ງ ສຳລັບການລະເມີດຄັ້ງທີໜຶ່ງ;
2. ເຈັດລ້ານກີບ ຕໍ່ຄັນ, ລຳ ຕໍ່ຄັ້ງ ສຳລັບການລະເມີດຄັ້ງທີສອງ;
3. ສິບລ້ານກີບ ຕໍ່ຄັນ, ລຳ ຕໍ່ຄັ້ງ ສຳລັບການລະເມີດຄັ້ງທີສາມຂຶ້ນໄປ.

ບຸກຄົນ ຫຼື ນິຕິບຸກຄົນ ທີ່ນຳໃຊ້ ລົດສີ່ລໍ້ ຫາ ສິບສອງລໍ້, ລົດໄຖນາໃຫຍ່ ແລະ ເຮືອໂດຍສານ ທຸກປະເພດ ເພື່ອ ລາກແກ່ ແລະ ຂົນສົ່ງ ໄມ້ ແລະ ເຄື່ອງປ່າຂອງດົງ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. ເຈັດລ້ານກີບ ຕໍ່ຄັນ, ລຳ ຕໍ່ຄັ້ງ ສຳລັບການລະເມີດຄັ້ງໜຶ່ງ;
2. ສິບລ້ານກີບ ຕໍ່ຄັນ, ລຳ ຕໍ່ຄັ້ງ ສຳລັບການລະເມີດຄັ້ງທີສອງ;
3. ສິບຫ້າລ້ານກີບ ຕໍ່ຄັນ, ລຳ ຕໍ່ຄັ້ງສຳລັບການລະເມີດຄັ້ງທີສາມຂຶ້ນໄປ.

ບຸກຄົນ ຫຼື ນິຕິບຸກຄົນ ທີ່ນຳໃຊ້ ລົດຈິກ, ລົດສິບແປດລໍ້ຂຶ້ນໄປ, ລົດພ່ວງ, ຕູ້ຄອນເທນເນີ້ ທຸກປະເພດ ເພື່ອ ລາກແກ່ ແລະ ຂົນສົ່ງ ໄມ້ ແລະ ເຄື່ອງປ່າຂອງດົງ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ-ດັ່ງນີ້:

1. ສາມສິບລ້ານກີບ ຕໍ່ຄັນ, ລຳ ຕໍ່ຄັ້ງ ສຳລັບການລະເມີດຄັ້ງທຳອິດ;
2. ສີ່ສິບລ້ານກີບ ຕໍ່ຄັນ, ລຳ ຕໍ່ຄັ້ງ ສຳລັບການລະເມີດຄັ້ງທີສອງ;
3. ຫ້າສິບລ້ານກີບ ຕໍ່ຄັນ, ລຳ ຕໍ່ຄັ້ງສຳລັບການລະເມີດຄັ້ງທີສາມຂຶ້ນໄປ.

**ມາດຕາ 16 ມາດຕະການອື່ນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດ ກົດໝາຍ ແລະ ລະບຽບການກ່ຽວກັບປ່າໄມ້ ນອກຈາກຖືກປັບໃໝແລ້ວ ຍັງຈະຖືກ ສຶກສາອົບຮົມ, ເຮັດບົດບັນທຶກໄວ້, ຢຶດຂອງກາງ, ໂຈະ ຫຼື ຖອນໃບອະນຸຍາດດຳເນີນກິດຈະການ ຫຼື ຮື້ຖອນສິ່ງປຸກສ້າງ ພ້ອມທັງ ຮັບຜິດຊອບຄ່າໃຊ້ຈ່າຍ ໃນການຮື້ຖອນສິ່ງປຸກສ້າງ ແລະ ໃຊ້ແທນຄືນຜົນເສຍຫາຍ ຕາມແຕ່ລະກໍລະນີ.

## ໝວດທີ 3
## ການຄຸ້ມຄອງ ຂອງກາງ, ການຊໍາລະ, ການນໍາໃຊ້ ເງິນປັບໃໝ ແລະ ເງິນຄ່າປົກປັກຮັກສາຂອງກາງ

**ມາດຕາ 17 ການຄຸ້ມຄອງຂອງກາງ**

ຂະແໜງການກະສິກໍາ ແລະ ປ່າໄມ້ ຕ້ອງຮັກສາ ແລະ ເກັບມ້ຽນ ຂອງກາງທີ່ເປັນເຄື່ອງຈັກ, ເຄື່ອງມື, ອຸປະກອນ, ພາ ຫະນະ, ໄມ້, ຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງ ທີ່ໄດ້ຍຶດນັ້ນ ໄວ້ເປັນຢ່າງດີ ແລະ ເຈົ້າຂອງ ຂອງກາງ ຕ້ອງຮັບຜິດ ຊອບຄ່າປົກປັກຮັກສາ ໂດຍຄິດໄລ່ ດັ່ງນີ້:

1. ສາມພັນ ກີບ ຕໍ່ ໜ່ວຍ ຕໍ່ ວັນ ສໍາລັບ ເຄື່ອງຈັກຕັດໄມ້, ເຄື່ອງມື ແລະ ອຸປະກອນ;
2. ສາມພັນ ກີບ ຕໍ່ ວັນ ສໍາລັບ ລໍ້, ລົດຖີບ, ລົດຈັກ;
3. ຫົກພັນ ກີບ ຕໍ່ ວັນ ສໍາລັບ ລົດໄຖນາເດີນຕາມ, ລົດໄຖໃຫຍ່, ລົດຊິ້ງ, ລົດສາມລໍ້, ເຮືອຫາງຍາວ;
4. ເກົ້າພັນ ກີບ ຕໍ່ ວັນ ສໍາລັບ ລົດສີ່ລໍ້, ຫົກລໍ້ ແລະ ເຮືອ ໂດຍສານ ທຸກປະເພດ;
5. ສິບຫ້າພັນ ກີບ ຕໍ່ ວັນ ສໍາລັບລົດສີ່ລໍ້, ຫົກລໍ້, ລົດ, ເຮືອ ໂດຍສານ ແລະ ສິນຄ້າ ຂະໜາດນ້ອຍ ແລະ ກາງ;
6. ຊາວພັນ ກີບ ຕໍ່ ວັນ ສໍາລັບ ລົດສິບລໍ້ຂຶ້ນໄປ, ລົດພ່ວງ ແລະ ເຮືອໂດຍສານ ທຸກປະເພດ;
7. ສິບຫ້າພັນ ກີບ ຕໍ່ ແມັດກ້ອນ ຕໍ່ວັນ ສໍາລັບໄມ້ ແລະ ຜະລິດຕະພັນໄມ້;
8. ສິບພັນ ກີບ ຕໍ່ ໂຕນ ຕໍ່ ວັນ ສໍາລັບ ເຄື່ອງປ່າຂອງດົງ.

ໃນໄລຍະທີ່ເກັບຮັກສາຂອງກາງ ນັ້ນ ບໍ່ອະນຸຍາດໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ນໍາໃຊ້ຂອງກາງດັ່ງກ່າວ. ໃນກໍລະ ນີ ລະເມີດ ຈະຖືກລົງວິໄນ ແລະ ໃຫ້ຮັບຜິດຊອບຄ່າເສຍຫາຍທີ່ເກີດຂຶ້ນ.

**ມາດຕາ 18 ການຊໍາລະເງິນຄ່າປັບໃໝ ແລະ ຄ່າປົກປັກຮັກສາຂອງກາງ**

ຜູ້ທີ່ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບປ່າໄມ້ ຕ້ອງຊໍາລະເງິນຄ່າປັບໃໝ ແລະ ຄ່າປົກປັກຮັກສາຂອງ ກາງ ໃຫ້ເຈົ້າໜ້າທີ່ປ່າໄມ້.

**ມາດຕາ 19 ການນໍາໃຊ້ເງິນ ທີ່ໄດ້ຮັບຈາກການປັບໃໝ ແລະ ຄ່າປົກປັກຮັກສາຂອງກາງ**

ເງິນທີ່ໄດ້ຈາກການປັບໃໝ ຕາມດໍາລັດສະບັບນີ້ 60 % (ຫົກສິບສ່ວນຮ້ອຍ) ໃຫ້ມອບເຂົ້າງົບປະມານແຫ່ງລັດ , ສ່ວນເງິນທີ່ເຫຼືອ 40 % (ສີ່ສິບສ່ວນຮ້ອຍ) ແມ່ນມອບເຂົ້າກອງທຶນປົກປັກຮັກສາປ່າໄມ້ ເພື່ອນໍາໃຊ້ ເຂົ້າໃນເປົ້າໝ າຍ ຕາມທີ່ກໍານົດໄວ້ໃນມາດຕາ 21 ຂອງດໍາລັດສະບັບນີ້.

**ມາດຕາ 20 ເປົ້າໝາຍການນໍາໃຊ້ເງິນທີ່ໄດ້ຈາກການປັບໃໝ**

ເງິນທີ່ໄດ້ຈາກການປັບໃໝ ທີ່ມອບເຂົ້າກອງທຶນປົກປັກຮັກສາປ່າໄມ້ ຕ້ອງນໍາໃຊ້ເຂົ້າໃນວຽກງານ ດັ່ງນີ້:

1. ໂຄສະນາເຜີຍແຜ່ ກົດໝາຍ, ດໍາລັດ ແລະ ລະບຽບການ ທີ່ກ່ຽວຂ້ອງກັບ ວຽກງານປ່າໄມ້;
2. ຕິດຕາມ, ກວດກາ ແລະ ຈັດຕັ້ງປະຕິບັດວຽກງານ ປ່າໄມ້;
3. ປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ໂດຍຈ່າຍເປັນເງິນ ອຸດໜູນ ໃຫ້ເຈົ້າໜ້າທີ່ ແລະ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ປະຕິບັດໜ້າທີ່ບັງຄັບໃຊ້ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານປ່າໄມ້;
4. ການເກັບມ້ຽນ, ການປົກປັກຮັກສາ ແລະ ການທໍາລາຍ ຂອງກາງ ທີ່ຍຶດມາໄດ້;
5. ການຈັດຊື້ ວັດຖຸປະກອນ ແລະ ສິ່ງອານວຍຄວາມສະດວກໃຫ້ແກ່ພະນັກງານ ແລະ ເຈົ້າໜ້າທີ່;

6. ວຽກງານອື່ນ ທີ່ກ່ຽວຂ້ອງກັບ ວຽກງານ ປ່າໄມ້.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 21 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການຈັດຕັ້ງປະຕິບັດດຳລັດສະບັບນີ້.

ບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 22 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ........... ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**